ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 126 ສປປ

# ລັດຖະດຳລັດ

## ຂອງປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ນໍ້າ**
**ແລະ ຊັບພະຍາກອນແຫລ່ງນໍ້າ**

---

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມເທື່ອທີ່ 9 ສະໄໝສາມັນ ຂອງ ສະພາແຫ່ງຊາດ ຊຸດທີ III ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ນໍ້າ ແລະ ຊັບພະຍາກອນແຫລ່ງນໍ້າ ສະບັບເລກທີ 005 ລົງວັນທີ 11 ຕຸລາ1996;
- ອີງຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08 / ຄປຈ, ລົງວັນທີ 16 ຕຸລາ 1996.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ນໍ້າ ແລະ ຊັບພະຍາກອນແຫລ່ງນໍ້າ.
ມາດຕາ 2: ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 2 ພະຈິກ 1996
ປະທານປະເທດ
ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05/ສພຊ

# ມະຕິຕົກລົງ

## ຂອງສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ
## ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ.

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີຂອງ ທ່ານ ຄຳອ້ວນ ບຸບຜາ ລັດຖະມົນຕີວ່າການກະຊວງຍຸຕິທຳ ແຫ່ງ ສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫລັງໄດ້ຄົ້ນຄວ້າພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ; ກອງປະຊຸມເທື່ອທີ 9 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ III ໃນວາລະປະຊຸມຕອນບ່າຍຂອງວັນສຸກ, ວັນທີ 11 ຕຸລາ 1996

**ຕົກລົງ:**

ມາດຕາ 1: ຮັບຮອງເອົາກົດໝາຍ ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

ມາດຕາ 2: ມະຕິຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 11 ຕຸລາ 1996

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 02-96

ວັນທີ 11/10/1996.

# ກົດຫມາຍ

## ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຫນ້າທີ່ຂອງກົດຫມາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ**

ກົດຫມາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆທີ່ຈຳເປັນ ກ່ຽວກັບການຄຸ້ມຄອງ, ຂຸດຄົ້ນ, ນຳໃຊ້, ພັດທະນານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແນໃສ່ປົກປັກຮັກສາ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ໃຫ້ຄົງຕົວຕະຫລອດໄປ ທັງຮັບປະກັນປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ທາງດ້ານຊີວິດການເປັນຢູ່ຂອງປະຊາຊົນ, ສົ່ງເສີມກະສິກຳ-ປ່າໄມ້, ອຸດສາຫະກຳ, ພັດທະນາເສດຖະກິດແຫ່ງຊາດ ທັງຮັບປະກັນບໍ່ໃຫ້ກໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມ.

**ມາດຕາ 2. ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ນ້ຳແມ່ນຊັບພະຍາກອນທຳມະຊາດ ຊະນິດຫນຶ່ງທີ່ເປັນທາດແຫລວ ຊຶ່ງແມ່ນຊັບພະຍາກອນຕົ້ນຕໍ ແລະ ພື້ນຖານກ່ວາໝູ່ ໃນບັນດາຊັບພະຍາກອນແຫຼ່ງນ້ຳ.

ຊັບພະຍາກອນແຫຼ່ງນ້ຳ ແມ່ນຊັບພະຍາກອນທຳມະຊາດ ຊຶ່ງປະກອບດ້ວຍສິ່ງທີ່ມີຊີວິດ ຫລືບໍ່ມີຊີວິດ ຢູ່ໃນນ້ຳ ຫລື ໃນແຫຼ່ງນ້ຳ ເຊັ່ນ: ພືດ, ສັດນ້ຳ, ຫີນ, ຫີນແຮ່, ຊາຍ, ຕົມ, ແຮ່ທາດ ແລະ ອື່ນໆ.

**ມາດຕາ 3. ແຫຼ່ງນ້ຳ ແລະ ອ່າງຮັບນ້ຳ**

ແຫຼ່ງນ້ຳ ແມ່ນສະຖານທີ່ ບ່ອນທີ່ມີການເຕົ້າໂຮມ, ອາໄສ, ພັກຕົວ ຫລື ເຄື່ອນໄຫຼແບບຖາວອນ ຫລື ຊົ່ວຄາວ ຂອງນ້ຳທຳມະຊາດ. ແຫຼ່ງນ້ຳມີຢູ່ເທິງຫນ້າດິນ, ໃຕ້ດິນ ແລະ ໃນອາກາດ.

ແຫຼ່ງນ້ຳໜ້າດິນ ແມ່ນແຫຼ່ງນ້ຳທີ່ຢູ່ເທິງໜ້າດິນ ຊຶ່ງເປັນສາຍຍາວຕິດຕໍ່ກັນ, ເປັນຈຸດ ເຊັ່ນ: ແມ່ນ້ຳ, ລຳເຊ, ຫ້ວຍ, ໜອງ, ຄອງ, ບຶງ, ທາມ, ເປືອມ, ນ້ຳອອກບໍ່ເປັນຕົ້ນ.

ແຫຼ່ງນ້ຳໃຕ້ດິນ ແມ່ນແຫຼ່ງນ້ຳທີ່ຢູ່ພື້ນດິນເປັນຊັ້ນ, ເປັນຜືງ, ເປັນສາຍ ຫລື ປົນກັນກັບ ເນື້ອດິນ.

ແຫຼ່ງນ້ຳອາກາດ ແມ່ນແຫຼ່ງນ້ຳທີ່ຢູ່ໃນອາກາດ ທີ່ມີສະພາບເປັນອາຍ ຫລື ເປັນເມັດນ້ອຍໆ ໂຮມກັນຢູ່ເຊັ່ນ: ໝອກ, ເມກ, ຝົນ, ໝາກເຫັບ.

ອ່າງຮັບນ້ຳ ແມ່ນຂອບເຂດເນື້ອທີ່ດິນ ແລະ ເນື້ອທີ່ປ່າໄມ້ທຸກຕອນ ຕັ້ງແຕ່ຍອດນ້ຳ ຈົນຮອດປາກນ້ຳ ບ່ອນທີ່ມີສັນປັນນ້ຳ ແລະ ບ່ອນທີ່ເຮັດໃຫ້ເມັດຝົນທີ່ຕົກລົງມາ ໄຫຼໂຮມກັນເຂົ້າເປັນລະບົບແຫຼ່ງນ້ຳ.

**ມາດຕາ 4. ກຳມະສິດກ່ຽວກັບ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ແມ່ນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນໃນການຄຸ້ມຄອງ ແລະກຳນົດການແບ່ງປັນ ໃຫ້ພາກສ່ວນຕ່າງໆ ຊົມໃຊ້ຢ່າງທົ່ວເຖິງ ແລະ ສົມເຫດສົມຜົນ. ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ຈະມີສິດຄອບຄອງນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເຂົ້າໃນກິດຈະການໃດໜຶ່ງໄດ້ ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດໜ້າທີ່ກ່ຽວຂ້ອງແລ້ວເທົ່ານັ້ນ ຍົກເວັ້ນການນຳໃຊ້ຂະໜາດນ້ອຍ ຕາມທີ່ກົດໝາຍສະບັບນີ້ໄດ້ກຳນົດໄວ້.

**ມາດຕາ 5. ການສົ່ງເສີມ, ການພັດທະນາ, ການປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ລັດຖະບານສົ່ງເສີມການພັດທະນາ, ການຂຸດຄົ້ນ, ນຳໃຊ້, ອະນຸລັກ ແລະ ປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ລວມທັງການ ສະກັດກັ້ນຜົນຮ້າຍຈາກນ້ຳ ແລະ ທຸກການກະທຳທີ່ຈະເຮັດໃຫ້ນ້ຳບົກແຫ້ງ.

**ມາດຕາ 6. ຫຼັກການພື້ນຖານການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ຕ້ອງດຳເນີນໄປຕາມຫຼັກການຄຸ້ມຄອງແບບລວມສູນ, ຄົບຊຸດ, ຄົບວົງຈອນ ຕາມແຜນການຈັດສັນ ທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 7. ພັນທະໃນການປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ເພື່ອເຮັດໃຫ້ການນຳໃຊ້ ແລະ ປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ດຳເນີນໄປຢ່າງມີປະສິດທິຜົນນັ້ນ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງມີພັນທະປະຕິບັດຕາມລະບຽບການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳຢ່າງເຂັ້ມງວດ.

## ໝວດທີ II
## ການສຳຫລວດ, ການຂຶ້ນບັນຊີ
## ແລະ ການກຳນົດປະເພດແຫຼ່ງນ້ຳ ແລະອ່າງຮັບນ້ຳ

### ມາດຕາ 8. ການສຳຫລວດ ແລະ ການຂຶ້ນບັນຊີ

ກະຊວງກະສິກຳ-ປ່າໄມ້ຮັບຜິດຊອບໂດຍກົງວຽກງານການສຳຫລວດຂຶ້ນບັນຊີແຫຼ່ງນ້ຳ ແລະ ອ່າງຮັບນ້ຳ ໃນຂອບເຂດທົ່ວປະເທດ ໂດຍສົມທົບ ກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

### ມາດຕາ 9. ການກຳນົດປະເພດແຫຼ່ງນ້ຳ

ເພື່ອຮັບໃຊ້ແຜນການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໃຫ້ຈັດແຫຼ່ງນ້ຳເປັນປະເພດຕາມຈຸດປະສົງຕົ້ນຕໍ ດັ່ງນີ້:

1. ແຫຼ່ງນ້ຳດື່ມ ແລະ ແຫຼ່ງນ້ຳໃຊ້ ແມ່ນແຫຼ່ງນ້ຳຊຶ່ງຈັດສັນໄວ້ ເພື່ອສະໜອງໃຫ້ແກ່ການບໍລິໂພກ ແລະ ອຸບປະໂພກ ຂອງປະຊາຊົນ;

2. ແຫຼ່ງນ້ຳສະຫງວນ ແມ່ນແຫຼ່ງນ້ຳຊຶ່ງຈັດສັນໄວ້ ເພື່ອປົກປັກຮັກສາສັດ, ພືດ, ສິ່ງທີ່ມີຊີວິດ , ສິ່ງທີ່ບໍ່ມີຊີວິດ ແລະອື່ນໆ ລວມທັງສິ່ງແວດລ້ອມທຳມະຊາດ, ສິ່ງທີ່ມີຄວາມໝາຍສຳຄັນ ແລະ ມີຄຸນຄ່າພິເສດ;

3. ແຫຼ່ງນ້ຳເພື່ອການຊົນລະປະທານ ແມ່ນແຫຼ່ງນ້ຳ ຊຶ່ງຈັດສັນໄວ້ ເພື່ອຕອບສະໜອງໃຫ້ແກ່ການຜະລິດກະສິກຳ-ປ່າໄມ້ ແລະ ການລ້ຽງສັດ;

4. ແຫຼ່ງນ້ຳເພື່ອການຜະລິດພະລັງງານໄຟຟ້າ ແມ່ນແຫຼ່ງນ້ຳຊຶ່ງຈັດສັນໄວ້ ເພື່ອຜະລິດພະລັງງານໄຟຟ້າ;

5. ແຫຼ່ງນ້ຳອຸດສາຫະກຳ ແມ່ນແຫຼ່ງນ້ຳຊຶ່ງຈັດສັນໄວ້ ເພື່ອການຜະລິດອຸດສາຫະກຳ;

6. ແຫຼ່ງນ້ຳ ເພື່ອການຂົນສົ່ງທາງນ້ຳ ແມ່ນແຫຼ່ງນ້ຳ ຊຶ່ງຈັດສັນໄວ້ ເພື່ອການເດີນເຮືອ ແລະ ການຂົນສົ່ງທາງນ້ຳ;

7. ແຫຼ່ງນ້ຳ ເພື່ອການທ່ອງທ່ຽວ ແມ່ນແຫຼ່ງນ້ຳ ຊຶ່ງຈັດສັນໄວ້ ເພື່ອຮັບໃຊ້ການທ່ອງທ່ຽວ;

8. ແຫຼ່ງນ້ຳ ເພື່ອຮັກສາສຸຂະພາບອະນາໄມ ແມ່ນແຫລ່ງນ້ຳທີ່ຈັດສັນໄວ້ ເພື່ອຮັບໃຊ້ສຸຂະພາບ ແລະການ ປິ່ນປົວ.

### ມາດຕາ 10. ປະເພດອ່າງຮັບນ້ຳ

ອ່າງຮັບນ້ຳ ມີສາມປະເພດ ຄື: ອ່າງຮັບນ້ຳແມ່, ອ່າງຮັບນ້ຳສາຂາ ແລະອ່າງຮັບນ້ຳກິ່ງ-ງ່າ.

1. ອ່າງຮັບນ້ຳແມ່ ແມ່ນອ່າງຮັບນ້ຳແມ່ນ້ຳຂອງ ຊຶ່ງຢູ່ໃນດິນແດນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

2. ອ່າງຮັບນ້ຳສາຂາ ແມ່ນອ່າງແຫຼ່ງນ້ຳ ຊຶ່ງຢູ່ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ເປັນສາຂາແມ່ນ້ຳຂອງ ຫຼືສາຂາແມ່ນ້ຳອື່ນໆ.

3. ອ່າງຮັບນໍ້າກິ່ງ-ງ່າ ແມ່ນອ່າງ ແຫຼ່ງນໍ້າ ທີ່ຕົກໃສ່ສາຂາແມ່ນໍ້າຂອງ ຫຼື ສາຂາແມ່ນໍ້າອື່ນໆ ຊຶ່ງຢູ່ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ອົງການຮັບຜິດຊອບກ່ຽວກັບນໍ້າເປັນຜູ້ຈັດປະເພດ ແລະ ກຳນົດຂອບເຂດຂອງອ່າງຮັບນໍ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

### ມາດຕາ 11. ການຈັດສັນແຫຼ່ງນໍ້າ ແລະ ອ່າງຮັບນໍ້າ

ໃນການຈັດສັນແຫຼ່ງນໍ້າ ແລະ ອ່າງຮັບນໍ້າ ໃຫ້ອີງຕາມການສຳຫລວດ ແລະ ການເກັບກຳຂໍ້ມູນຕ່າງໆ ເພື່ອກຳນົດການແບ່ງປັນ, ຄຸ້ມຄອງ ແລະ ນຳໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ໃຫ້ຖືກຕາມເປົ້າໝາຍ ແລະ ມີປະສິດທິຜົນ.

### ມາດຕາ 12. ການກຳນົດການແບ່ງປັນນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ

ເພື່ອຮັບປະກັນໃຫ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ທີ່ມີຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຖືກຊົມໃຊ້ຢ່າງທົ່ວເຖິງ ແລະ ຖືກຕ້ອງຕາມເປົ້າໝາຍ ລັດຖະບານຈະເປັນຜູ້ກຳນົດ ການແບ່ງປັນນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ.

## ໝວດທີ III
## ການນຳໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ

### ມາດຕາ 13. ເປົ້າໝາຍຂອງການນຳໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ

ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ສາມາດນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆເຊັ່ນ: ການບໍລິໂພກ ແລະ ອຸບປະໂພກ ໃນຄອບຄົວ, ການຊົນລະປະທານ, ການຫາປາ, ລ້ຽງປາ ແລະສັດນໍ້າອື່ນໆ, ການຜະລິດກະສິກຳ-ປ່າໄມ້, ການລ້ຽງສັດ, ການຜະລິດພະລັງງານໄຟຟ້າ, ການຜະລິດອຸດສາຫະກຳ, ການຄົມມະນາຄົມຂົນສົ່ງ, ການກິລາ, ການພັກຜ່ອນ, ການແພດ, ວັດທະນະທຳ ແລະອື່ນໆ.

ການນຳໃຊ້ນໍ້າ ເຂົ້າໃນການຜະລິດ ພະລັງງານໄຟຟ້າ ແລະ ການຊົນລະປະທານນັ້ນ ຈະມີຂໍ້ກຳນົດສະເພາະ.

ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າໃດໜຶ່ງ ສາມາດນຳໃຊ້ເຂົ້າໃນເປົ້າໝາຍການນຳໃຊ້ໃດໜຶ່ງ ຫລື ຫລາຍເປົ້າໝາຍກໍໄດ້ ແລ້ວແຕ່ກໍລະນີ ແລະ ຄວາມເໝາະສົມ. ສຳລັບແຫຼ່ງນໍ້າໃຕ້ດິນຕ້ອງສະຫງວນໄວ້ ເປັນແຫຼ່ງນໍ້າດື່ມ ແລະ ນໍ້າໃຊ້ເປັນຕົ້ນຕໍ, ສ່ວນການນຳໃຊ້ນໍ້າໃຕ້ດິນເຂົ້າໃນກິດຈະການຂະໜາດກາງ ແລະ ຂະໜາດໃຫຍ່ນັ້ນ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ.

### ມາດຕາ 14. ສິດໃນການນຳໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ

ບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງມີສິດນຳໃຊ້ນໍ້າ ແລະ ຊັບພະຍາກອນແຫລ່ງນໍ້າເຂົ້າ

ໃນການໃຊ້ສອຍໃນຄອບຄົວ ຫລື ໃນການດຳເນີນທຸລະກິດ.

ສິດໃນການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ມີ ສາມ ລະດັບດັ່ງນີ້: ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.

ສິດໃນການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ຕ້ອງປະຕິບັດໃຫ້ສອດຄ່ອງກັບແຜນການຈັດສັນແຫຼ່ງນ້ຳ.

**ມາດຕາ 15. ການນຳໃຊ້ຂະໜາດນ້ອຍ**

ການນຳໃຊ້ຂະໜາດນ້ອຍ ແມ່ນການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ຊຶ່ງບໍ່ແມ່ນລັກສະນະທຸລະກິດ ເພື່ອຈຸດປະສົງດັ່ງນີ້:

1. ໃຊ້ສອຍໃນຄອບຄົວ ເພື່ອຜົນປະໂຫຍດສ່ວນລວມ ຂອງບ້ານ ຫລື ເພື່ອຜົນປະໂຫຍດທາງດ້ານວັດທະນະທຳ ແລະ ກິລາ;

2. ຫາປາ, ລ້ຽງປາ ຫລື ສັດນ້ຳອື່ນໆ;

3. ຂຸດຄົ້ນເອົາດິນ, ຫີນ, ຫີນແຮ່, ຊາຍ, ຕົມ ແລະ ພືດອື່ນໆທີ່ມີຢູ່ໃນ ຫລື ຢູ່ອ້ອມແຫຼ່ງນ້ຳ;

4. ນຳໃຊ້ເຂົ້າໃນການຜະລິດ ກະສິກຳ-ປ່າໄມ້ ແລະ ລ້ຽງສັດຂັ້ນພື້ນຖານຂອງຄອບຄົວ.

ການນຳໃຊ້ຂະໜາດນ້ອຍນັ້ນຈະປະຕິບັດໄດ້ ກໍຕໍ່ເມື່ອຫາກບໍ່ມີການເກືອດຫ້າມຈາກກະຊວງ ຫລື ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 16. ການນຳໃຊ້ຂະໜາດກາງ**

ການນຳໃຊ້ຂະໜາດກາງ ແມ່ນການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເພື່ອຈຸດປະສົງດັ່ງນີ້:

1. ກໍ່ສ້າງຝາຍ ຫລື ເຂື່ອນຂະໜາດນ້ອຍ, ສ້າງສິ່ງກີດກັ້ນເພື່ອຢຸດ ຫລື ປ່ຽນທາງໄຫຼຂອງນ້ຳ ຫລື ສ້າງຝາຍ, ຄັນຄູຕັດຜ່ານສາຍນ້ຳ ເພື່ອໃຊ້ເປັນທາງຫຍ່ງ ຫລື ສ້າງເປັນອ່າງເກັບນ້ຳ ຂະໜາດນ້ອຍ ສຳລັບໃຊ້ຜະລິດ ພະລັງງານໄຟຟ້າ ຫລື ຊົນລະປະທານ, ລ້ຽງສັດ, ຫາປາ ແລະ ອື່ນໆ;

2. ຂຸດຄົ້ນເອົາຫີນ, ຫີນແຮ່, ຊາຍ, ດິນ, ຕົມ, ແຮ່ທາດ, ຕົ້ນໄມ້ ຫລື ອື່ນໆ ທີ່ຢູ່ໃນ ຫລື ຢູ່ອ້ອມແຫຼ່ງນ້ຳ ຊຶ່ງມີຜົນກະທົບເບົາບາງຕໍ່ທຳມະຊາດ ແລະສິ່ງແວດລ້ອມ;

3. ຕິດຕັ້ງເຄື່ອງຈັກດູດນ້ຳຂະໜາດນ້ອຍ ເພື່ອດຳເນີນການຜະລິດ ຫລື ການບໍລິການທີ່ບໍ່ແມ່ນ ການໃຊ້ສອຍໃນຄອບຄົວ;

4. ນຳໃຊ້ແຫຼ່ງນ້ຳເພື່ອການທຸລະກິດທ່ອງທ່ຽວ, ທຸລະກິດກິລາ ແລະ ທຸລະກິດວັດທະນະທຳ.

**ມາດຕາ 17. ການນຳໃຊ້ຂະໜາດໃຫຍ່**

ການນຳໃຊ້ຂະໜາດໃຫຍ່ ແມ່ນການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເພື່ອຈຸດປະ

ສົງດັ່ງນີ້:

1. ສ້າງອ່າງເກັບນ້ຳຂະໜາດກາງ ແລະ ໃຫຍ່ ເພື່ອຈຸດປະສົງ ການຊົນລະປະທານ, ບໍລິໂພກ, ອຸປະໂພກ, ຜະລິດພະລັງງານໄຟຟ້າ;

2. ກໍ່ສ້າງອາຄານ ຫລື ການຕິດຕັ້ງໂຮງຈັກ, ໂຮງງານ, ອຸປະກອນ, ກົນຈັກຂະໜາດໃຫຍ່ ຢູ່ໃນເຂດແຫຼ່ງນ້ຳ, ຢູ່ໃກ້ຄຽງ ຫລື ຢູ່ອ້ອມແຫຼ່ງນ້ຳ;

3. ນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ໃນປະລິມານທີ່ສູງ ເຂົ້າໃນຂະບວນການຜະລິດ ຂອງໂຮງງານອຸດສາຫະກຳ.

**ມາດຕາ 18. ການນຳໃຊ້ແຕ່ລະປະເພດ**

ການນຳໃຊ້ຂະໜາດນ້ອຍບໍ່ຈຳເປັນຕ້ອງຂໍອະນຸຍາດ. ສຳລັບການນຳໃຊ້ຂະໜາດກາງ ແລະ ການນຳໃຊ້ຂະໜາດໃຫຍ່ນັ້ນ ຕ້ອງໄດ້ຂໍອະນຸຍາດ, ຂຶ້ນທະບຽນ ຫລື ເຮັດສັນຍາ. ນອກຈາກນີ້ສຳລັບການນຳໃຊ້ຂະໜາດໃຫຍ່ນັ້ນ ຕ້ອງມີບົດວິພາກເສດຖະກິດ-ເຕັກນິກ, ບົດວິພາກຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ການແກ້ໄຂຜົນກະທົບດັ່ງກ່າວຢ່າງຄັກແນ່.

**ມາດຕາ 19. ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**

ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ໃຫ້ປະຕິບັດຕາມການຄຸ້ມຄອງແບບລວມສູນ ແລະ ແບ່ງຂັ້ນຄຸ້ມຄອງ ຕາມແຕ່ລະຂະໜາດ ແລະ ສິດໃນການນຳໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ການນຳໃຊ້ຂະໜາດໃຫຍ່ ແມ່ນລັດຖະບານເປັນຜູ້ອະນຸມັດ.

ການນຳໃຊ້ຂະໜາດກາງ ແມ່ນອົງການທີ່ກ່ຽວຂ້ອງ ເປັນຜູ້ອະນຸມັດ, ແຕ່ສຳລັບການນຳໃຊ້ຂະໜາດກາງ ທີ່ມີຄວາມສຳຄັນນັ້ນ ຕ້ອງໄດ້ຮັບຄວາມເຫັນດີຈາກລັດຖະບານ.

ສ່ວນການຄຸ້ມຄອງ ແລະ ຕິດຕາມກວດກາການນຳໃຊ້ນັ້ນ ມອບໃຫ້ຂະແໜງການ ແລະອຳນາດການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເປັນຜູ້ປະຕິບັດ.

## ໝວດທີ IV
## ການພັດທະນາແຫຼ່ງນ້ຳ ແລະ
## ການຄຸ້ມຄອງ ກິດຈະການພັດທະນາແຫຼ່ງນ້ຳ

**ມາດຕາ 20. ກິດຈະການພັດທະນາແຫຼ່ງນ້ຳ**

ກິດຈະການພັດທະນາແຫຼ່ງນ້ຳ ແມ່ນກິດຈະການກ່ຽວກັບການກໍ່ສ້າງ, ຂຸດ, ເຈາະ, ຕິດຕັ້ງ, ປັບປຸງ, ເສີມຂະຫຍາຍ ແລະສ້ອມແປງອ່າງນ້ຳ ຫລືອ່າງເກັບນ້ຳ, ສະ, ນ້ຳສ້າງ, ນ້ຳບາດານ, ຮ່ອງ , ຄູ ຫລື ທໍ່ລະບາຍນ້ຳ ເພື່ອຂຸດຄົ້ນ,ລວບລວມ,ທົດຫລືເກັບນ້ຳຈາກ ແຫຼ່ງນ້ຳໜ້າດິນ, ແຫຼ່ງນ້ຳໃຕ້ດິນ ຫລື ແຫຼ່ງນ້ຳໃນອາກາດ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ

13 ຂອງກົດໝາຍສະບັບນີ້ ລວມທັງກິດຈະການກ່ຽວກັບການປ້ອງກັນຜົນຮ້າຍ ຈາກໄພນໍ້າຖ້ວມ, ໄພແຫ້ງແລ້ງ ແລະ ໄພເຊາະເຈື່ອນ.

**ມາດຕາ 21. ການດໍາເນີນກິດຈະການພັດທະນາແຫຼ່ງນໍ້າ**

ບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງ ຈະດໍາເນີນກິດຈະການພັດທະນາແຫຼ່ງນໍ້າໃດໜຶ່ງໄດ້ ກໍຕໍ່ເມື່ອ ຫາກໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດໜ້າທີ່ກ່ຽວຂ້ອງເທົ່ານັ້ນ ຍົກເວັ້ນແຕ່ກິດຈະການ ພັດທະນາແຫຼ່ງນໍ້າຂະໜາດນ້ອຍ ທີ່ບໍ່ແມ່ນເປົ້າໝາຍເກືອດຫ້າມ.

**ມາດຕາ 22. ຫລັກການຄຸ້ມຄອງກິດຈະການພັດທະນາແຫຼ່ງນໍ້າ**

ກິດຈະການພັດທະນາແຫຼ່ງນໍ້າ ຕ້ອງປະຕິບັດຕາມຫລັກການດັ່ງນີ້:

1. ຕ້ອງດໍາເນີນໃຫ້ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ແຜນແມ່ບົດ, ແຜນພັດທະນາແຕ່ລະໄລຍະ ຂອງແຕ່ລະຂະແໜງການ ແລະ ແຜນກໍ່ສ້າງຂອງແຕ່ ລະໂຄງການທີ່ໄດ້ຮັບອະນຸມັດ;

2. ຕ້ອງຮັບປະກັນ ການອະນຸລັກນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ, ສິ່ງແວດລ້ອມ ແລະ ຄວາມສວຍງາມ ຂອງທິວທັດທໍາມະຊາດ;

3. ຕ້ອງປ້ອງກັນຜົນຮ້າຍຕ່າງໆຈາກນໍ້າ;

4. ຕ້ອງດໍາເນີນພາຍໃຕ້ການກວດກາ ຂອງອົງການຮັບຜິດຊອບກ່ຽວກັບນໍ້າ ແລະ ຊັບພະ ຍາກອນແຫຼ່ງນໍ້າ.

**ມາດຕາ 23. ການຄຸ້ມຄອງກິດຈະການພັດທະນາແຫຼ່ງນໍ້າ**

ຂະແໜງການ ແລະ ອົງການຮັບຜິດຊອບກ່ຽວກັບນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ມີ ໜ້າທີ່ອອກລະບຽບການ ກ່ຽວກັບກິດຈະການພັດທະນາແຫຼ່ງນໍ້າ.

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ດໍາເນີນກິດຈະການພັດທະນາແຫຼ່ງນໍ້າ ມີໜ້າທີ່ ບົວລະບັດ, ປົກປັກຮັກສາສິ່ງກໍ່ສ້າງຂອງຕົນ ໃຫ້ຢູ່ໃນສະພາບດີ ແລະ ຮັບປະກັນຄວາມປອດໄພ.

ບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງ ທີ່ໄດ້ຊົມໃຊ້ ຫລື ໄດ້ຮັບຜົນປະໂຫຍດ ຈາກກິດ ຈະການພັດທະນາແຫຼ່ງນໍ້າ ມີໜ້າທີ່ປະກອບສ່ວນ ເຂົ້າໃນການໃຫ້ຂໍ້ມູນ, ບົວລະບັດ, ປົກປັກຮັກສາ ກິດຈະການພັດທະນາແຫຼ່ງນໍ້ານັ້ນ.

**ມາດຕາ 24. ທຶນປະກອບສ່ວນໃນການປົກປັກຮັກສາ ຕົ້ນກໍາເນີດຂອງນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ**

ຜູ້ດໍາເນີນກິດຈະການພັດທະນາ ແລະ ນໍາໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ຕ້ອງມີທຶນ ປະກອບສ່ວນ ໃນການປົກປັກຮັກສາຕົ້ນກໍາເນີດຂອງນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ.

**ມາດຕາ 25. ການສົ່ງເສີມການປົກປັກຮັກສາ ການພັດທະນາຕົ້ນກໍາເນີດຂອງນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ ເພື່ອຮັບໃຊ້ການຜະລິດ ພະລັງງານໄຟຟ້າ**

ລັດຖະບານສົ່ງເສີມການພັດທະນາ ແລະ ການນໍາໃຊ້ຊັບພະຍາກອນແຫຼ່ງນໍ້າ ເຂົ້າໃສ່ການຜະລິດພະລັງງານໄຟຟ້າ ຂະໜາດໃຫຍ່, ຂະໜາດກາງ ແລະ ຂະໜາດນ້ອຍ ຢູ່ແຫຼ່ງນໍ້າບ່ອນທີ່ມີເງື່ອນໄຂ ສ້າງພະລັງງານໄຟຟ້າ. ການນໍາໃຊ້ຊັບພະຍາກອນແຫຼ່ງນໍ້າ ຕ້ອງຄໍານຶງເຖິງທ່າແຮງ ແລະຜົນກະທົບຂອງມັນ, ບ່ອນທີ່ມີເງື່ອນໄຂ ຄວນສ້າງເຂື່ອນໄຟຟ້າ ຫລາຍແຫ່ງ ຫລື ສ້າງເຂື່ອນໄຟຟ້າທີ່ມີຜົນປະໂຫຍດຫລາຍດ້ານ ແບບມີແຜນການໃນລໍານໍ້າດຽວກັນ.

ໃນການສ້າງເຂື່ອນໄຟຟ້າ ຕ້ອງຄໍານຶງເຖິງການປົກປັກຮັກສາຕົ້ນກໍາເນີດຂອງນໍ້າ, ປ່າໄມ້, ສິ່ງແວດລ້ອມ, ການປ້ອງກັນໄພນໍ້າຖ້ວມ, ການສະໜອງນໍ້າ, ການຊົນລະປະທານ, ການຄົມມະນາຄົມທາງນໍ້າ, ການຫາປາ, ລ້ຽງປາ, ສັດນໍ້າ ແລະອື່ນໆ.

**ມາດຕາ 26. ການສົ່ງເສີມໃຫ້ປະຊາຊົນສ້າງອ່າງເກັບນໍ້າ**

ລັດສົ່ງເສີມໃຫ້ປະຊາຊົນສ້າງອ່າງເກັບນໍ້າ ເພື່ອຮັບປະກັນໃຫ້ແກ່ການຜະລິດກະສິກໍາ-ປ່າໄມ້ ແລະ ລ້ຽງສັດ, ອໍານາດການປົກຄອງທ້ອງຖິ່ນ ມີໜ້າທີ່ປຸກລະດົມ ແລະ ມີວິທີການຊຸກຍູ້ຢ່າງເໝາະສົມ ເຊັ່ນ: ມີນະໂຍບາຍໃຫ້ສິນເຊື່ອ, ຍົກເວັ້ນ ຫລື ລຸດຜ່ອນພາສີອາກອນເປັນຕົ້ນ .

**ມາດຕາ 27. ການອວ່າຍ,ແຍກຫລືປ່ຽນທາງໄຫຼຂອງນໍ້າ**

ໃນກິດຈະການພັດທະນາແຫຼ່ງນໍ້ານັ້ນ ສໍາຫລັບຂະໜາດນ້ອຍ ການອວ່າຍ, ແຍກ ຫລືປ່ຽນ ທາງໄຫຼຂອງນໍ້າ ຕ້ອງໄດ້ຮັບອະນຸຍາດຈາກອໍານາດການປົກຄອງຂັ້ນແຂວງ ຫລື ກໍາແພງນະຄອນ; ຂະໜາດກາງ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ; ຂະໜາດໃຫຍ່ ຕ້ອງໄດ້ຮັບຄວາມເຫັນດີ ຂອງສະພາແຫ່ງຊາດ.

**ມາດຕາ 28. ການໂຍກຍ້າຍປະຊາຊົນ**

ໃນເມື່ອມີຄວາມຈໍາເປັນຕ້ອງໂຍກຍ້າຍປະຊາຊົນ ອອກຈາກສະຖານທີ່ ແລະ ບໍລິເວນໂຄງການພັດທະນາແຫຼ່ງນໍ້ານັ້ນ ເຈົ້າຂອງໂຄງການ ຕ້ອງໄດ້ໃຫ້ຄວາມຊ່ວຍເຫຼືອ ໃນການຊອກບ່ອນຢູ່ອາໄສ ແລະ ທີ່ທໍາມາຫາກິນ ອັນເໝາະສົມໃຫ້ເຂົາເຈົ້າ. ທຶນທີ່ຈະນໍາໃຊ້ເຂົ້າໃນການໂຍກຍ້າຍ, ໃຫ້ຄວາມຊ່ວຍເຫຼືອ ຫລື ໃຊ້ແທນຄ່າເສຍຫາຍແກ່ປະຊາຊົນນັ້ນ ແມ່ນໃຫ້ຄິດໄລ່ເຂົ້າ ໃນມູນຄ່າການລົງທຶນຂອງໂຄງການ.

## ໝວດທີ V
## ການປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ

### ມາດຕາ 29. ການປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ມີພັນທະປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ບໍ່ເຮັດໃຫ້ນ້ຳຕື້ນເຂີນ, ບົກແຫ້ງ, ເປິະເປື້ອນ ຫລື ເນົ່າເຫມັນ ແລະບໍ່ໃຫ້ກໍ່ຜົນເສຍຫາຍແກ່ນ້ຳ, ຊັບພະຍາກອນແຫລ່ງນ້ຳ, ຊັບສົມບັດສາທາລະນະ ແລະ ຊັບສົມບັດຂອງບຸກຄົນອື່ນ. ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳຕ້ອງມີການປະຢັດ ແລະ ໃຫ້ມີມາດຕະການຫລຸດຜ່ອນ ຜົນກະທົບທີ່ບໍ່ດີຕໍ່ສິ່ງແວດລ້ອມ ແລະ ຄວາມສວຍງາມຂອງທຳມະຊາດ. ນອກຈາກນີ້ຍັງມີພັນທະປົກປັກຮັກສາ, ຟື້ນຟູ ແລະບູລະນະຊັບພະຍາກອນປ່າໄມ້ ແລະ ດິນ ໃນເຂດອ່າງຮັບນ້ຳໃຫ້ຖືກຕ້ອງຕາມແຜນຈັດສັນແຫຼ່ງນ້ຳ, ປ່າໄມ້, ທີ່ດິນ ແລະ ລະດູການຢ່າງເຂັ້ມງວດ ໂດຍສະເພາະໃນເຂດບໍລິເວນຕົ້ນກຳເນີດຂອງນ້ຳ ຫລື ຢູ່ອ້ອມແຫຼ່ງນ້ຳ.

ລັດຖະບານຈະເປັນຜູ້ກຳນົດເຂດປົກປັກຮັກສາ ແລະ ເຂດສະຫງວນ ເພື່ອອະນຸລັກຊັບພະຍາກອນແຫຼ່ງນ້ຳ.

### ມາດຕາ 30. ເຂດປ້ອງກັນນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ

ລັດຖະບານເປັນຜູ້ກຳນົດເຂດປ້ອງກັນນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ ເພື່ອແນໃສ່ຕອບສະຫນອງປະລິມານ ແລະ ຄຸນນະພາບຂອງນ້ຳ ໃຫ້ປະຊາຊົນໃນຕົວເມືອງ ແລະ ຊົນນະບົດ. ບໍລິເວນເຂດປ້ອງກັນດັ່ງກ່າວ ອາດຈະຫມາຍເຂດແດນ ຫລື ລ້ອມຮົ້ວໄວ້. ໃນບໍລິເວນເຂດປ້ອງກັນ ບໍ່ໃຫ້ມີສິ່ງປຸກສ້າງ, ທຳການຜະລິດກະສິກຳ, ອຸດສາຫະກຳ, ລ້ຽງສັດ, ຂຸດຄົ້ນຫີນ, ແຮ່ທາດ, ດິນ, ຊາຍ, ຖອກຂີ້ເຫຍື້ອ, ສິ່ງເສດເຫລືອ, ນ້ຳເປື້ອນ, ຂອງເປື່ອ, ວັດຖຸເຄມີ, ຖິ້ມລະເບີດ, ຝັງຊາກສົບ ຫລື ຊາກສັດ ແລະອື່ນໆ ທີ່ກໍ່ຄວາມເສຍຫາຍ.

ໃນກໍລະນີທີ່ເຫັນວ່າມີຄວາມເສຍຫາຍ ຢ່າງຮ້າຍແຮງຕໍ່ປະລິມານ ແລະ ຄຸນນະພາບ ຂອງນ້ຳ ຫລື ມີການສ່ຽງຕໍ່ການແຜ່ຂະຫຍາຍເຊື້ອພະຍາດຕ່າງໆນັ້ນ ລັດຖະບານຈະກຳນົດເຂດ ຫລື ເນື້ອທີ່ປ້ອງກັນເພີ່ມເຕີມ ຫລື ນຳໃຊ້ມາດຕະການປ້ອງກັນອື່ນໆອີກ.

### ມາດຕາ 31. ການເກືອດຫ້າມ

ເພື່ອເຮັດໃຫ້ການປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ມີປະສິດທິຜົນ ຫ້າມເດັດຂາດບໍ່ໃຫ້ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ :

1. ດຳເນີນການນຳໃຊ້, ຂຸດຄົ້ນ ຫລື ທຳລາຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ທີ່ຢູ່ໃນເຂດສະຫງວນ;

2. ຕັດຕົ້ນໄມ້ທີ່ຢູ່ໃນເຂດປ້ອງກັນຕົ້ນກຳເນີດຂອງນ້ຳ ຫລື ຢູ່ອ້ອມແຫຼ່ງນ້ຳ;

3. ຂຸດ, ເຈາະ, ກົ່ນ ຫລື ປັບແປງຫນ້າດິນ ທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ ໃນເຂດອ່າງ

ຮັບນ້ຳ, ຖິ້ມ ຫລື ຖອກເທວັດຖຸສິ່ງຂອງ ລົງໃນແຫຼ່ງນ້ຳ ຊຶ່ງຈະພາໃຫ້ແຫຼ່ງນ້ຳຕື້ນເຂີນ ບົກແຫ້ງ ຫລື ເນົ່າເຫມັນເປັນພິດ.

ຫ້າມການກະທຳດັ່ງຕໍ່ໄປນີ້ເວັ້ນເສຍແຕ່ໄດ້ຮັບອະນຸຍາດ:

1. ກໍ່ສ້າງ ຫລືປຸກສ້າງຢູ່ແຄມນ້ຳ, ຮີມນ້ຳ ແລະໃນນ້ຳ;

2. ຂຸດຄົ້ນ, ດູດ ຫລື ຈົກເອົາຊາຍ, ຫີນແຮ່, ແຮ່ທາດ, ດິນ ຫລື ຕົມ ອອກຈາກພື້ນທີ່ແຄມຝັ່ງ ຫລື ເຂດອ້ອມແຫຼ່ງນ້ຳ;

3. ຂຸດຄອງລະບາຍນ້ຳ, ຖົມ, ດັດແປງ ຫລື ປ່ຽນເນື້ອທີ່ແມ່ນ້ຳ, ຫນອງ, ບຶງ, ຫານທີ່ເປັນຂອງສາທາລະນະລວມທັງການຈັດຕັ້ງ ແລະ ບຸກຄົນທີ່ຈະກໍ່ຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງສາທາລະນະ ແລະ ຜູ້ອື່ນ;

4. ກໍ່ສ້າງສິ່ງກີດຂວາງທາງໄຫຼຂອງນ້ຳ ຫລື ກີດຂວາງທາງຄົມມະນາຄົມທາງນ້ຳ;

5. ດັດແປງທາງໄຫຼຂອງນ້ຳ ຫລື ສ້າງປະຕູປິດ-ເປີດນ້ຳ, ຂຸດ ຫລື ຈົກ ຮ່ອງລະບາຍນ້ຳຂະຫນາດກາງ ຫລື ຂະຫນາດໃຫຍ່.

ຄຽງຄູ່ກັບການເກືອດຫ້າມເຫົ່ງນີ້ ລັດຖະບານຍັງສົ່ງເສີມການປູກຕົ້ນໄມ້ ແລະ ຟື້ນຟູປ່າໄມ້ຢູ່ໃນເຂດປ້ອງກັນແຫຼ່ງນ້ຳອີກດ້ວຍ.

### ມາດຕາ 32. ມາດຕະຖານຄຸນນະພາບນ້ຳ

ອົງການຮັບຜິດຊອບກ່ຽວກັບນ້ຳ ເປັນຜູ້ກຳນົດມາດຕະຖານຄຸນນະພາບນ້ຳດື່ມ ແລະ ນ້ຳທີ່ໃຊ້ ແລ້ວຊຶ່ງລະບາຍລົງສູ່ແຫຼ່ງນ້ຳ ຫລື ແຫ່ງອື່ນໆ.

## ຫມວດທີ VI
## ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ

### ມາດຕາ 33. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ

ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ແມ່ນສະພາບຄວາມເປັນຈິງ ທີ່ຕ້ອງໃຫ້ເປັນໄປຕາມທຳມະຊາດ ຫລື ຕາມກົດຫມາຍກຳນົດ.

### ມາດຕາ 34. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມທຳມະຊາດ

ຜູ້ຄອບຄອງທີ່ດິນຕອນເທິງ ບໍ່ມີສິດກີດກັ້ນການໄຫລອັນປົກກະຕິຂອງນ້ຳ ຊຶ່ງຈະສ້າງຄວາມເສຍຫາຍໃຫ້ແກ່ຜູ້ຊົມໃຊ້ນ້ຳຢູ່ໃນທີ່ດິນຕອນລຸ່ມ.

ໃນກໍລະນີທີ່ມີການກີດກັນ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ຊົມໃຊ້ນ້ຳຢູ່ທີ່ດິນຕອນລຸ່ມນັ້ນ ຜູ້ຄອບຄອງທີ່ດິນຕອນເທິງຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍຕາມຄວາມເຫມາະສົມ.

ຜູ້ຄອບຄອງທີ່ດິນຕອນລຸ່ມ ຈຳຕ້ອງໄດ້ໃຫ້ນ້ຳທີ່ໄຫລໂດຍທຳມະຊາດ ຈາກທີ່ດິນຕອນເທິງລົງສູ່ ຫລື ຜ່ານທີ່ດິນຂອງຕົນ.

ໃນກໍລະນີທີ່ຜູ້ຄອບຄອງທີ່ດິນຕອນລຸ່ມ ຫາກໄດ້ກັກຕັນນ້ຳ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ຄອບຄອງທີ່ດິນຕອນເທິງ ຜູ້ຄອບຄອງທີ່ດິນຕອນລຸ່ມດັ່ງກ່າວນັ້ນ ກໍຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນນັ້ນ.

**ມາດຕາ 35. ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມກົດໝາຍ**

ຜູ້ທີ່ໄດ້ປຸກສ້າງ ຫລື ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໃດໜຶ່ງ ມີສິດໄດ້ຮັບທາງຜ່ານຂອງນ້ຳທຸກປະເພດລວມທັງນ້ຳເປື້ອນ, ນ້ຳເສຍຄຸນ ຫລືນ້ຳເປັນພິດ ໂດຍໃຊ້ທໍ່ ຫລື ຂຸດຮ່ອງຜ່ານທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ແຕ່ຕ້ອງມີມາດຕະການຢ່າງເໝາະສົມ ແລະ ບໍ່ໃຫ້ກໍ່ຄວາມເສຍຫາຍ ແກ່ຜູ້ຄອບຄອງທີ່ດິນຕອນທີ່ນ້ຳໄຫລຜ່ານນັ້ນ .

ໃນກໍລະນີທີ່ມີການລະເມີດ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມກົດໝາຍ ອັນໄດ້ກໍ່ຄວາມເສຍຫາຍ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງແລ້ວ ຜູ້ລະເມີດ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກກໍລະນີດັ່ງກ່າວ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມຄວາມເໝາະສົມ. ຖ້າວ່າຜູ້ຍອມຮັບຕາມກົດໝາຍ ຫາກຖືກເສຍຫາຍ ແຕ່ກໍໄດ້ຮັບຜົນປະໂຫຍດນຳແລ້ວກໍຕ້ອງໃຊ້ແທນຄ່າເສຍຫາຍຕາມຄວາມເໝາະສົມເຊັ່ນກັນ.

**ມາດຕາ 36. ສິດຂອງຜູ້ຄອບຄອງ ຫລື ຜູ້ທີ່ຢູ່ໃກ້ຄຽງທີ່ດິນ ທີ່ເປັນທາງຜ່ານຂອງນ້ຳ**

ຜູ້ຄອບຄອງທີ່ດິນທີ່ເປັນທາງນ້ຳຜ່ານ ຫລື ທີ່ດິນໃກ້ຄຽງ ມີສິດໃຊ້ກິດຈະການທີ່ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້ ແຕ່ຕ້ອງປະກອບສ່ວນໃນການໃຊ້ຈ່າຍຕ່າງໆ ເຊັ່ນ: ຄ່າກໍ່ສ້າງ , ຄ່ານຳໃຊ້ ແລະ ຄ່າບົວລະບັດ ຮັກສາຕາມສ່ວນທີ່ຕົນນຳໃຊ້ກິດຈະການເຫລົ່ານັ້ນ.

**ມາດຕາ 37. ສິດ ແລະ ພັນທະຂອງອົງການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ**

ອົງການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳມີສິດຕິດຕັ້ງ, ປຸກສ້າງສິ່ງທີ່ຈຳເປັນໃສ່ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງ ເພື່ອແຈກຢາຍ, ກວດການ້ຳ ຫລື ປັບປຸງຄຸນນະພາບຂອງນ້ຳ ລວມທັງສິດເບິ່ງສາຍໄຟຟ້າ, ທໍ່ນ້ຳຜ່ານທີ່ດິນດັ່ງກ່າວ ແຕ່ຕ້ອງໄດ້ທົດແທນຄ່າເສຍຫາຍ ທີ່ເກີດຂຶ້ນນັ້ນຢ່າງເໝາະສົມ.

**ມາດຕາ 38. ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເນື່ອງມາຈາກ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ແມ່ນອຳນາດການປົກຄອງ ເປັນຜູ້ແກ້ໄຂດ້ວຍການໄກ່ເກ່ຍ. ຖ້າຫາກບໍ່ສາມາດຕົກລົງກັນໄດ້ ແມ່ນສານຈະເປັນຜູ້ພິຈາລະນາແກ້ໄຂ.

## ໝວດທີ VII
## ການສະກັດກັ້ນ ແລະ ການຕ້ານຜົນຮ້າຍຈາກນ້ຳ

### ມາດຕາ 39. ຜົນເສຍຫາຍຈາກນ້ຳ

ຜົນເສຍຫາຍຈາກນ້ຳ ແມ່ນຄວາມເສຍຫາຍທີ່ເນື່ອງມາຈາກນ້ຳ ຍ້ອນໄພທຳມະຊາດ ຫລື ຍ້ອນການກະທຳຂອງຄົນເຊັ່ນ: ນ້ຳຖ້ວມ, ນ້ຳມາກ, ນ້ຳຍັ່ງ, ການເກີດນ້ຳເຄັມ, ນ້ຳເປື້ອນ, ນ້ຳເສຍຄຸນ, ນ້ຳຂຸ່ນ, ນ້ຳຕື້ນເຂີນ, ການເຊາະເຈື່ອນ ແລະ ອື່ນໆ.

### ມາດຕາ 40. ການຕ້ານໄພນ້ຳຖ້ວມ

ອຳນາດການປົກຄອງທຸກຂັ້ນ ຕ້ອງເປັນເຈົ້າການໃນການນຳພາ ແລະ ນຳໃຊ້ມາດຕະການຕ່າງໆ ທີ່ມີປະສິດທິຜົນ, ປະຕິບັດຕາມແຜນການລວມ ແລະ ຄຳແນະນຳ ກ່ຽວກັບການກັນ ແລະ ຕ້ານໄພນ້ຳຖ້ວມ. ໃນກໍລະນີທີ່ມີໄພນ້ຳຖ້ວມເກີດຂຶ້ນກະທັນຫັນ ອຳນາດການປົກຄອງໃນບ່ອນນັ້ນຕ້ອງເປັນເຈົ້າການໃນການແກ້ໄຂ.

ເພື່ອກັນ ແລະ ຕ້ານໄພນ້ຳຖ້ວມ ອຳນາດການປົກຄອງແຕ່ລະຂັ້ນ ມີສິດລະດົມວັດຖຸອຸປະກອນ, ແຮງງານ ແລະ ນຳໃຊ້ງົບປະມານຂອງລັດ, ຂອງບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງເຂົ້າໃນການກັນ ແລະ ຕ້ານໄພນ້ຳຖ້ວມ. ເມື່ອວຽກງານສິ້ນສຸດແລ້ວ ຕ້ອງສົ່ງວັດຖຸອຸປະກອນນັ້ນຄືນໃຫ້ເຈົ້າຂອງ ແລະ ໃຊ້ແທນຄ່າເສຍຫາຍ ຂອງວັດຖຸອຸປະກອນດັ່ງກ່າວ ຕາມຄວາມເຫມາະສົມ.

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ມີພັນທະໃຫ້ຄວາມຮ່ວມມືແກ່ອຳນາດການປົກຄອງໃນການກັນ ແລະ ຕ້ານໄພນ້ຳຖ້ວມ.

### ມາດຕາ 41. ການກັນ ແລະ ຕ້ານໄພເຊາະເຈື່ອນ

ອົງການຮັບຜິດຊອບກ່ຽວກັບນ້ຳ ແລະ ອຳນາດການປົກຄອງທຸກຂັ້ນ ຕ້ອງເພີ່ມທະວີການນຳພາ ໃນການກັນ ແລະ ຕ້ານໄພເຊາະເຈື່ອນ. ຫ້າມດຳເນີນກິດຈະການທີ່ຈະພາໃຫ້ເກີດການເຊາະເຈື່ອນເຊັ່ນ: ການກໍ່ສ້າງ, ການຕັດຕົ້ນໄມ້, ການຂຸດຄົ້ນເອົາຫີນ, ຫີນແຮ່, ດິນ, ຊາຍ, ແຮ່ທາດ ແລະອື່ນໆ. ນອກຈາກນັ້ນແລ້ວ ເພື່ອເຮັດໃຫ້ການສະກັດກັ້ນໄພ ຈາກການເຊາະເຈື່ອນມີປະສິດທິຜົນ ອົງການດັ່ງກ່າວ ຕ້ອງມີແຜນການ ເພື່ອກັນໄພເຊາະເຈື່ອນ ຢູ່ບ່ອນທີ່ມີຄວາມຈຳເປັນເຊັ່ນ: ການປູກຕົ້ນໄມ້ຕາມຕາຝັ່ງ ແລະ ດຳເນີນມາດຕະການອື່ນໆ.

### ມາດຕາ 42. ການປ້ອງກັນນ້ຳເປື້ອນ ແລະ ນ້ຳເສຍຄຸນ

ນ້ຳເປື້ອນແມ່ນນ້ຳທີ່ບໍ່ສະອາດ ຫລື ນ້ຳທີ່ໄດ້ຜ່ານການໃຊ້ແລ້ວ ຊຶ່ງສາມາດນຳມາໃຊ້ໄດ້ອີກພາຍຫລັງທີ່ໄດ້ຜ່ານການບຳບັດແລ້ວ.

ນ້ຳເສຍຄຸນ ແມ່ນນ້ຳທີ່ຜ່ານການໃຊ້ແລ້ວ ທີ່ມີສິ່ງສົກກະປົກ, ສານເຄມີເຈືອປົນຢູ່ ຊຶ່ງພາໃຫ້ເສຍຄຸນລັກສະນະຂອງນ້ຳ ທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

ບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງ ຕ້ອງເຄົາລົບລະບຽບການ ກ່ຽວກັບການປ້ອງກັນນ້ຳເສຍຄຸນ.

ຫ້າມທຸກການກະທຳ ທີ່ຈະກໍ່ຄວາມເສຍຫາຍໃຫ້ແກ່ນ້ຳ ຫລື ຊັບພະຍາກອນແຫຼ່ງນ້ຳ, ສິ່ງແວດລ້ອມ, ສັດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ຫ້າມຖິ້ມ ຫລື ປ່ອຍສິ່ງເສດເຫລືອທຸກປະເພດ ລົງໃນແຫຼ່ງນ້ຳ ຊຶ່ງຈະກໍ່ໃຫ້ເກີດນ້ຳເປື້ອນ ຫລື ນ້ຳເສຍຄຸນເກີນລະດັບມາດຕະຖານຄວາມເປິະເປື້ອນ ແລະ ຄຸນນະພາບຂອງນ້ຳ ທີ່ໄດ້ອະນຸມັດ.

ກ່ອນຈະຖິ້ມ, ປ່ອຍນ້ຳເປື້ອນ, ນ້ຳເສຍຄຸນ ຫລື ສິ່ງເສດເຫລືອ ທີ່ເກີນລະດັບມາດຕະຖານ ລົງສູ່ແຫຼ່ງນ້ຳ ຕ້ອງໄດ້ມີການບຳບັດເສຍກ່ອນເຊັ່ນ: ນ້ຳຈາກໂຮງຈັກ, ໂຮງງານ, ໂຮງຂ້າສັດ, ໂຮງພະຍາບານ ແລະ ອື່ນໆ.

ຖ້າບຸກຄົນໃດຫາກພົບເຫັນການກະທຳທີ່ກ່າວເທິງນີ້ ຕ້ອງລາຍງານໃຫ້ອຳນາດການປົກຄອງບ້ານ ຫລື ອົງການທີ່ມີໜ້າທີ່ຮັບຜິດຊອບກ່ຽວຂ້ອງຊາບ ເພື່ອມີວິທີການແກ້ໄຂຢ່າງທັນການ.

**ມາດຕາ 43. ການຕິດຕາມ ແລະ ກວດກາ**

ອົງການຮັບຜິດຊອບກ່ຽວກັບນ້ຳ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ມີໜ້າທີ່ຕິດຕາມ, ກວດກາຢ່າງເປັນປະຈຳ ກ່ຽວກັບການເຄົາລົບ ແລະ ປະຕິບັດບັນດາມາດຕະການດັ່ງນີ້ :

1. ມາດຕະຖານ, ປະລິມານ ແລະ ຄຸນນະພາບຂອງນ້ຳ ຕາມທີ່ລະບຽບກົດໝາຍໄດ້ກຳນົດໄວ້;

2. ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ໃຫ້ຖືກຕ້ອງຕາມປະເພດ ແລະ ລະບອບການນຳໃຊ້;

3. ການປະຕິບັດໂຄງການກໍ່ສ້າງກ່ຽວກັບການພັດທະນາແຫຼ່ງນ້ຳ ໃຫ້ຖືກຕ້ອງຕາມແຜນການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ, ແຜນຈັດສັນແຫຼ່ງນ້ຳ, ແຜນແມ່ບົດ ແລະ ແຜນກໍ່ສ້າງກ່ຽວກັບການພັດທະນາແຫຼ່ງນ້ຳ.

ນອກຈາກການປະຕິບັດລະບຽບກົດໝາຍອື່ນໆ ກ່ຽວກັບນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳແລ້ວ ຍັງຕ້ອງໄດ້ຈັດຕັ້ງກອງທຶນ ເພື່ອປົກປັກຮັກສາ ແລະ ພັດທະນານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳອີກຕື່ມ.

## ໝວດທີ VIII
## ການຮ່ວມມືສາກົນກ່ຽວກັບການນຳໃຊ້, ຄຸ້ມຄອງ, ປົກປັກຮັກສາ,ພັດທະນານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ

**ມາດຕາ 44. ການພັດທະນາ, ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ລະຫວ່າງປະເທດ**

ການຂຸດຄົ້ນ, ນຳໃຊ້, ຄອບຄອງ, ປົກປັກຮັກສາ, ພັດທະນານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳລະຫວ່າງປະເທດ, ຕ້ອງດຳເນີນໃຫ້ສອດຄ່ອງກັບກົດໝາຍ ລະຫວ່າງຊາດ ແລະ ສົນທິສັນຍາທີ່ໄດ້ເຊັນນຳກັນເຊັ່ນ: ການນຳໃຊ້, ການອະນຸລັກແຫຼ່ງນ້ຳ ແລະຊັບພະຍາກອນແຫຼ່ງນ້ຳຮ່ວມລະຫວ່າງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບປະເທດໃກ້ຄຽງ ຕ້ອງດຳເນີນບົນພື້ນຖານຄວາມຍຸຕິທຳ, ສົມເຫດສົມຜົນ, ຄວາມສະເໝີພາບ, ການເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະກັນ.

**ມາດຕາ 45. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ລະຫວ່າງປະເທດ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບປະເທດໃກ້ຄຽງ ກ່ຽວກັບການຂຸດຄົ້ນ, ນຳໃຊ້, ຄຸ້ມຄອງ, ປົກປັກຮັກສານ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ແລະ ການປ້ອງກັນຜົນເສຍຫາຍຈາກນ້ຳ ຕ້ອງແກ້ໄຂໂດຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບລັດຖະບານຂອງປະເທດທີ່ກ່ຽວຂ້ອງ ບົນພື້ນຖານມິດຕະພາບ, ສະເໝີພາບ ໂດຍຜ່ານທາງການທູດ ແລະ ຕາມທີ່ໄດ້ບົ່ງໄວ້ໃນສັນຍາລະຫວ່າງຊາດ ທີ່ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ເຂົ້າຮ່ວມ ແລະຮັບຮູ້.

## ໝວດທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46. ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປົກປັກຮັກສາ, ພັດທະນາ, ຂຸດຄົ້ນ, ນຳໃຊ້, ອະນຸລັກແຫລ່ງນ້ຳ, ຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບແຜນການພັດທະນາເສດຖະກິດ-ສັງຄົມ, ແຜນຈັດສັນແຫຼ່ງນ້ຳ, ແຜນອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ ລວມທັງການສ້າງອ່າງເກັບນ້ຳ ແລະ ການປູກຕົ້ນໄມ້ ຢູ່ໃນເຂດປ້ອງກັນແຫຼ່ງນ້ຳ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກຳນົດ.

**ມາດຕາ 47. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລືອົງການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ ຫລື ລົງໂທດຕາມລະບຽບ ກົດໝາຍ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວແຕ່ກໍລະນີໃນສະຖານໜັກ ຫລື ເບົາ.

ໃນກໍລະນີທີ່ມີການໃຊ້ແທນທາງແພ່ງ ຫລື ມີການລົງໂທດທາງອາຍາ ສິ່ງກໍ່ສ້າງ ຫລື ກິດຈະການທີ່ບໍ່ຖືກຕ້ອງນັ້ນ ຈະຖືກຮື້ຖອນ ຫລື ທຳລາຍຖິ້ມ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 48. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ອອກຂໍ້ກຳນົດ ລະອຽດ ເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 49. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ຫລັງຈາກ 90 ວັນ ນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດ ປະກາດໃຊ້ ເປັນຕົ້ນໄປ. ຂໍ້ກຳນົດ ແລະ ລະບຽບການຕ່າງໆ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 11 / 10 / 1996.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ